ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເລກທີ 3586 ---- /ຮສສ

ນະຄອນຫຼວງວຽງຈັນ, ວັນທີ 13 / 09 / 18

# ຂໍ້ຕົກລົງ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມ ເມືອງ, ເທດສະບານ, ນະຄອນ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ ເລກທີ 68 /ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ສະບັບເລກທີ 200/ນຍ, ລົງວັນທີ 30 ມິຖຸນາ 2017;
- ອີງຕາມ ການຄົ້ນຄ້ວານຳສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

ລັດຖະມົນຕີ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກຂອງຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ, ເທດສະບານ, ນະຄອນ ເພື່ອເປັນບ່ອນອີງດ້ານນິຕິກຳໃຫ້ແກ່ການຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ກ່ຽວກັບວຽກງານແຮງງານ ແລະ ສະຫວັດດີການສັງຄົມ, ວຽກງານກາແດງ ແລະ ວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ, ເທດສະບານ, ນະຄອນ ຂຽນດ້ວຍຕົວອັກສອນຫຍໍ້ວ່າ "ຮສສ.ມ", "ຮສສ.ທບ", "ຮສສ.ນຄ" ສັງກັດໃນໂຄງປະກອບກົງຈັກຂອງອົງການປົກຄອງເມືອງ, ເທດສະບານ, ນະຄອນ, ຊຶ່ງມີສາຍຕັ້ງຂຶ້ນກັບພະແນກແຮງງານ ແລະ ສະຫວັດດີການສັງຄົມ ແຂວງ, ນະຄອນຫຼວງ, ມີພາລະບົດບາດເປັນເສນາທິການໃຫ້ແກ່ອົງການປົກຄອງເມືອງ, ເທດສະບານ, ນະຄອນ ແລະ ພະແນກແຮງງານ ແລະ ສະຫວັດດີ

ການສັງຄົມ ແຂວງ, ນະຄອນຫຼວງ ໃນການຄຸ້ມຄອງ-ບໍລິຫານວຽກງານແຮງງານ ແລະ ສະຫວັດດີການສັງຄົມ, ວຽກງານກາແດງ ແລະ ວຽກງານແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງ ຢູ່ ສປປ ລາວ ໃນຂອບເຂດຄວາມຮັບຜິດຊອບຂອງເມືອງ, ເທດສະບານ, ນະຄອນ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

### ມາດຕາ 3 ໜ້າທີ່

1. ປະຕິບັດແນວທາງນະໂຍບາຍຂອງພັກ, ມະຕິ, ຄຳສັ່ງຂອງຂັ້ນເທິງ, ຫັນແຜນພັດທະນາວຽກງານແຮງງານ ແລະ ສະຫວັດດີການສັງຄົມຂອງ ກະຊວງ, ພະແນກ ຮສສ ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ ເປັນແຜນການ, ແຜນງານລະອຽດ ໃນແຕ່ລະໄລຍະໃຫ້ມີຜົນສຳເລັດ;
2. ປະຕິບັດກົດໝາຍ ແລະ ນິຕິກຳຕ່າງໆ ລຸ່ມກົດໝາຍ ຂອງກະຊວງ, ແຂວງ, ນະຄອນຫຼວງ, ເມືອງ, ເທດສະບານ, ນະຄອນ ກ່ຽວກັບວຽກແຮງງານ ແລະ ສະຫວັດດີການສັງຄົມ;
3. ເກັບກຳສະຖິຕິຜູ້ອອກແຮງງານ ຢູ່ໃນຫົວໜ່ວຍທຸລະກິດ, ການຜະລິດ ແລະ ການບໍລິການ ລວມທັງຂໍ້ມູນຜູ້ມີວຽກເຮັດງານທຳ, ຜູ້ບໍ່ມີວຽກເຮັດງານທຳ, ຜູ້ຕ້ອງການມີວຽກເຮັດງານທຳ ແລະ ຜູ້ຕ້ອງການຍົກລະດັບສີມືແຮງງານ ຢູ່ພາຍໃນເມືອງ, ເທດສະບານ, ນະຄອນ ໃນແຕ່ລະໄລຍະ;
4. ເປັນເຈົ້າການປະສານສົມທົບກັບພາກສ່ວນກ່ຽວຂ້ອງ ຄຸ້ມຄອງ, ກວດກາ, ຕິດຕາມ ແລະ ຊຸກຍູ້ການນຳໃຊ້ແຮງງານລາວ ແລະ ແຮງງານຕ່າງປະເທດ, ເງື່ອນໄຂການອອກແຮງງານ, ຄວາມປອດໄພ ແລະ ສຸຂະພາບໃນການອອກແຮງງານ ແລະ ສະຫວັດດີການແຮງງານ ຂອງບັນດາຫົວໜ່ວຍແຮງງານ ຢູ່ພາຍໃນເມືອງ, ເທດສະບານ, ນະຄອນ ຕາມກົດໝາຍແຮງງານ ກຳນົດໄວ້;
5. ຊຸກຍູ້ ແລະ ສົ່ງເສີມໃຫ້ບັນດາບໍລິສັດ, ໂຮງຈັກ, ໂຮງງານ, ຫົວໜ່ວຍແຮງງານ ທັງພາກລັດ ແລະ ເອກະຊົນຈັດຕັ້ງການຝຶກສີມືແຮງງານ ໃຫ້ກຳລັງແຮງງານລາວ ຕາມເງື່ອນໄຂຕົວຈິງຂອງແຕ່ລະພາກສ່ວນ;
6. ເກັບກຳຂໍ້ມູນ, ຂື້ນແຜນ ແລະ ປະຕິບັດນະໂຍບາຍຊ່ວຍເຫຼືອສົງເຄາະໃຫ້ແກ່ຜູ້ປະສົບໄພພິບັດທີ່ເກີດຂຶ້ນ ແລະ ຜູ້ດ້ອຍໂອກາດໃນສັງຄົມ, ເດັກກຳພ້າ-ກຳພອຍ, ຜູ້ດ້ອຍໂອກາດ, ຜູ້ປ່ຽວພອຍ-ອະນາຖາ, ຜູ້ຍົກຍ້າຍຖິ່ນຖານ ແລະ ຜູ້ມີບັນຫາສັງຄົມອື່ນໆ ຢູ່ພາຍໃນເມືອງ, ເທດສະບານ, ນະຄອນ;
7. ເກັບກຳຂໍ້ມູນ, ສະຖິຕິ, ຕິດຕາມ ແລະ ກວດກາ ການປະຕິບັດນະໂຍບາຍປະກັນສັງຄົມ ແລະ ການເຂົ້າເຖິງລະບົບປະກັນສັງຄົມ ຂອງພະນັກງານ-ລັດຖະກອນ, ພະນັກງານບຳນານ, ພະນັກງານເສຍອົງຄະ, ວິລະຊົນແຫ່ງຊາດ, ນັກຮົບແຂ່ງຂັນ, ຜູ້ເສຍສະຫຼະຊີວິດ ເພື່ອປະເທດຊາດ, ຄອບຄົວຜູ້ເສຍສະຫຼະຊີວິດ ເພື່ອຊາດທີ່ຂາດຜູ້ດູແລ, ຜູ້ມີຄຸນງາມຄວາມດີຕໍ່ຊາດ, ຕໍ່ການປະຕິວັດ, ຜູ້ພິການ ແລະ ຜູ້ອາຍຸສູງ, ບັນດາຫົວໜ່ວຍວິສາຫະກິດ, ຜູ້ປະກອບອາຊີບສ່ວນບຸກຄົນ, ອາຊີບອິດສະຫຼະ ທີ່ສະໝັກໃຈເຂົ້າລະບົບປະກັນສັງຄົມ ຢູ່ພາຍໃນເມືອງ, ເທດສະບານ, ນະຄອນ;
8. ປົກປັກຮັກສາ ແລະ ສົ່ງເສີມສຸຂະພາບຂັ້ນພື້ນຖານ; ປຸກລະດົມຂົບຂວາຍສັງຄົມມີສ່ວນຮ່ວມໃນການບໍລິຈາກເລືອດການສະໜອງເລືອດປອດໄພ, ຮັບຮູ້ຄຸນຄ່າດ້ານມະນຸດສະທຳ, ຂົບຂວາຍແຫຼ່ງທຶນ ແລະ ອາສາສະໝັກກາແດງ ໃນ